# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 12 ສິງຫາ 2007 ( 08-12-2007 )

---

## ໃນເມື່ອທ່ານໝົດກຳລັງໃຈ:

**ຂໍ້ພຣະຄັມພີໃນບົດຮຽນ:** 1 ກະສັດ 19:1-13, 15-18

**ຄຳຖາມແຫ່ງຊີວິດ:** ຈະເຮັດແນວໃດໃນເມື່ອຂ້າພະເຈົ້າໝົດກຳລັງໃຈໃນການຮັບໃຊ້ພຣະເຈົ້າ?

**ຄວາມຈິງໃນພຣະຄັມພີ:** ນິມິດໃໝ່ຈາກຣັສມີຂອງພຣະເຈົ້າ ຈະຊ່ອຍໃຫ້ຜູ້ເຊື່ອມີກຳລັງໃຈຂຶ້ນມາ

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ອຍໃຫ້ທ່ານຮູ້ວ່າພຣະເຈົ້າຈະຊ່ອຍທ່ານໃນເມື່ອພົບກັບສະພາບການທີ່ໜັກໜ່ວງໂດຍ:

- ສຳຫລວດເບິ່ງວ່າແມ່ນຫຍັງທີ່ເຮັດໃຫ້ທ່ານໝົດກຳລັງໃຈ ແລະ.
- ການປາຖນາຢາກມີນິມິດໃໝ່ຈາກຣັສມີ ແລະຈຸດປະສົງຂອງພຣະເຈົ້າ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>ແຜນການສອນ</u>", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>** - ໃນເມື່ອຊີວິດຖືກຕົກຕ່ຳລົງຂໍໃຫ້ເບິ່ງໄປເບື້ອງເທິງ.

- ໃຫ້ຍົກຕົວຢ່າງຂອງຜູ້ທີ່ໝົດກຳລັງໃຈທີ່ທ່ານຮູ້ຈັກດີ ແລະຜູ້ນັ້ນເປັນຜູ້ຮັບໃຊ້ພຣະເຈົ້າດ້ວຍ: ແມ່ນໃຜເປັນຜູ້ຕອບຄຳອະທິຖານລາວ, ຜູ້ທີ່ເຊື່ອພຣະເຈົ້າຢ່າງແທ້ຈິງ ແລະເຊື່ອໄວ້ວາງໃຈໃນພຣະເຈົ້າດ້ວຍຄວາມໝັ້ນໃຈ ຜູ້ນັ້ນແຫລະຈະໄດ້ຮັບການຊ່ອຍເຫລືອໃຫ້ມີກຳລັງໃຈຂຶ້ນມາໃໝ່.

ຄຳຖາມ: ທ່ານຄິດວ່າຢ່າງໃດໃນເມື່ອໄດ້ຍິນຄຳວ່າ "ໝົດກຳລັງໃຈ" ? ທ່ານຈະເຮັດໃຫ້ມີກຳລັງໃຈຂຶ້ນມາໃໝ່ໄດ້ຢ່າງໃດ?

## 1. ໃຫ້ຮູ້ຈັກ: ( 1 ກະສັດ 19:1-3 )

1) ຂໍໃຫ້ນັກຮຽນອາສາສມັກອ່ານ 1 ກະສັດ 19:1-3

2) ໃນພຣະທັມ 1 ກະສັດ 18:20-46 ທ່ານຜູ້ປະກາດພຣະທັມ ເອລີຢາ ໄດ້ມີຊັຍຊະນະຜູ້ປະກາດພຣະທັມປອມ ຫລາຍກວ່າຮ້ອຍຄົນ.

3) ໃນເນື້ອຫາຂອງພຣະທັມ 1 ກະສັດບົດທີ 18 ທ່ານເອລີຢາໄດ້ເຮັດໃຫ້ເຫັນຢ່າງແຈ່ມແຈ້ງໄປເຖິງ 1 ກະສັດ 19:1-3 ນັ້ນ ທັມມະດາ ຫລືຜິດປົກກະຕິ?

**ຄຳຖາມ:** 1. ທ່ານເອລີຢາເຮັດນັ້ນຖືກຕ້ອງຕາມກົດໝາຍບໍ່?

2. ໃນຈຳນວນຜູ້ປະກາດພຣະທັມປອມຈຳນວນຮ້ອຍຄົນນັ້ນມີບາງຄົນໄດ້ໜີລອດຕາຍໄປໄດ້ຫລືບໍ່?

**ອະທິບາຍ:** ການດຳເນີນຊີວິດຢູ່ໃນພຣະຄຣິດບໍ່ແມ່ນຈະໃຫ້ທ່ານພົ້ນຈາກການຢ້ານກົວ ແລະຄວາມໝົດກຳລັງໃຈ ຄວາມຢ້ານກົວເປັນຄວາມຮູ້ສຶກອີກຢ່າງນຶ່ງທີ່ຄຣິສຕຽນທຸກຄົນຈະຕ້ອງໄດ້ປະເຊີນ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** 1 ກະສັດ 19:1-3

1. ທຸກເທື່ອທີ່ທ່ານພົບກັບຄວາມຢ້ານອັນໃຫຍ່ຫລວງ ທ່ານສາມາດຕໍ່ສູ້, ຜ່ານຜ່ານັນໄດ້ບໍ່?
2. ທ່ານມີຄວາມເປັນຫ່ວງເປັນໃຍ ແລະກາຍມາເປັນຄວາມຢ້ານກົວຢູ່ບໍ່?
3. ທ່ານຈະເອົາຊະນະຕໍ່ຄວາມຢ້ານກົວນັ້ນຢ່າງໃດ?

## 2. ເລີ້ມຕົ້ນໃໝ່: 1 ກະສັດ 19:3ຂ-9ກ

1. ຂໍໃຫ້ອາສາສມັກອ່ານພຣະທັມ 1 ກະສັດ 19:3ຂ-9ກ

**ອະທິບາຍ:** ທ່ານເອລີຢາໄດ້ແລ່ນໜີເພື່ອເອົາຊີວິດລອດ. ໃນເມື່ອທ່ານມາຮອດເມືອງ ເບເອນເຊບາ, ທ່ານໄດ້ປະຄົນໃຊ້ຂອງທ່ານໄວ້ໃນເມືອງນີ້, ແລະເພິ່ນເອງໄດ້ເດີນທາງໄປຖິ່ນກັນດານ.

ໃນຂະນະທີ່ນັ່ງເຊົາເມື່ອຍຢູ່ຮົ່ມຕົ້ນໄມ້ນັ້ນ ເພິ່ນກໍຄິດຢາກຕາຍ.

- ສັງເກດເບິ່ງ ( 1 ກະສັດ 19:5-7) ໃນຂະນະທີ່ທ່ານເອລີຢາມີຄວາມອິດເມື່ອຍນັ້ນ, ພຣະເຈົ້າກໍໄດ້ປະທານອາຫານຝ່າຍຮ່າງກາຍໃຫ້ແກ່ລາວ.

**ຄຳຖາມ:** 1. ໃນເວລາທ່ານມີຄວາມໝົດກຳລັງໃຈ ຫລືຮູ້ສຶກເປົ່າປ່ຽວນັ້ນ, ພຣະເຈົ້າໄດ້ເຂົ້າມາຊູກຳລັງໃຈທ່ານຂຶ້ນບໍ່?

2. ຖ້າພຣະອົງໄດ້ຊົງຊ່ອຍຊູກຳລັງໃຈທ່ານ, ພຣະອົງຊົງຊ່ອຍດ້ວຍວິທີໃດ? ຖ້າບໍ່ ເປັນເພາະເຫດໃດ?

3. ເປັນຫຍັງພຣະເຈົ້າຈຶ່ງປະທານອາຫານໃຫ້ທ່ານເອລີຢາໂດຍຜ່ານທາງເທວະດາ?

**ສັງເກດ:** ຄວາມຈິງ, ພຣະເຈົ້າໄດ້ຊົງປະທານອາຫານໃຫ້ເອລີຢາຜ່ານທາງເທວະດາກໍເພື່ອໃຫ້ທ່ານມີເຫື່ອແຮງເດີນທາງໄປຕາມພູເຂົາໂຮເຣັບຊຶ່ງເປັນລະຍະທາງ 40 ມື້ນັ້ນໃຫ້ສຳເຣັດ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** 1 ກະສັດ 19:3ຂ-9ກ

1. ບັນຫາທີ່ທ່ານພົບຢູ່ໃນທຸກວັນນີ້ທ່ານຄິດວ່າມັນຫລາຍໂພດສຳລັບທ່ານບໍ່?
2. ພຣະເຈົ້າໄດ້ຊົງກະທຳຢ່າງໃດໃຫ້ເຫັນໃນ ພຣະທັມ 1 ກະສັດບົດທີ19:5-7 ?
3. ທ່ານໄດ້ເອົາໃຈໃສ່ດູແລ ຮ່າງກາຍ, ວິນຍານ ແລະອາລົມຄວາມຮູ້ສຶກຂອງທ່ານເປັນຢ່າງດີຢູ່ບໍ່?
4. ທາງທີ່ດີໃນການດູແລຕົນເອງທີ່ເຮັດໃຫ້ຕົນເອງດີທີ່ສຸດເພື່ອທ່ານຈະຖວາຍຕົວທ່ານໃຫ້ພຣະເຈົ້າໃຊ້ໄດ້ນັ້ນມີທາງໃດແດ່?

**3. <u>ປະເມີນຜົນ:</u>** 1 ກະສັດ 19:9ຂ-13ກ

1. ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ 1 ກະສັດ 19:9ຂ-13ກ

**ອະທິບາຍ:** ທ່ານເອລີຢາຢາກໄດ້ຍິນສຽງຈາກພຣະເຈົ້າໃນທາງປະສາດສຳຜັດທີ່ທ່ານເຄີຍໄດ້ປະສົບການໃນພຣະທັມ 1 ກະສັດບົດທີ 18 ນັ້ນວ່າ "ເອລີຢາ ເຈົ້າມາເຮັດຫຍັງຢູ່ທີ່ນີ້?"

**ຄຳຖາມ:** 1. ທ່ານມີຄວາມຮູ້ສືກວ່າທ່ານເປັນຜູ້ຮັບໃຊ້ພຽງຄົນດຽວຢູ່ບໍ່?

2. ທ່ານໄດ້ຮຽນຈາກປະສົບການຢ່າງນີ້ແນວໃດ?

3. ທ່ານເອລີຢາໄດ້ຍິນສຽງທາງການປະສາດສຳຜັດຈາກພຣະເຈົ້າບໍ່? ( ເປັນສຽງເບົາ ໆ)

4. ໃນເວລາພວກເຮົາຄິດວ່າ ເຮົາໄດ້ຍິນສຽງຂອງພຣະເຈົ້າທີ່ເຂົ້າມາໃນທາງຄວາມຄິດນັ້ນເປັນຄວາມຈິງຫລືບໍ່? ( ພວກເຮົາຕ້ອງພ້ອມທີ່ຈະໄດ້ຍິນສຽງຂອງພຣະເຈົ້າຢູ່ທຸກເວລາ)

**ອະທິບາຍ:** ຄວາມຈິງແລ້ວ ທ່ານບໍ່ອາດສາມາດເຫັນພາບພົດອັນຍິ່ງໃຫຍ່ທີ່ພຣະເຈົ້າຈັດໄວ້ສຳລັບຊີວິດຂອງທ່ານໄດ້ສເມີໄປ.

- ພວກເຮົາຈະພົບກັບການໝົດກຳລັງໃຈໄດ້ຢ່າງງ່າຍດາຍໄດ້. ຈົ່ງຈຳໄວ້ວ່າພຣະເຈົ້າເຫັນພາບພົດທັງໝົດ ແລະພຣະອົງຈະເປັນຜູ້ນຳໜ້າພວກເຮົາທຸກຢ່າງ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** 1 ກະສັດ 19:9ຂ-13ກ

1. ພຣະເຈົ້າເວົ້າກັບທ່ານແນວໃດ?
2. ພຣະເຈົ້າໄດ້ຊົງຮຽກເອີ້ນທ່ານໃຫ້ເຮັດຫຍັງແດ່?
3. ແມ່ນຫຍັງທີ່ຍາກທີ່ສຸດທີ່ພຣະອົງບອກໃຫ້ທ່ານເຮັດ?
4. ທ່ານໄດ້ເຊື່ອໝັ້ນ ແລະໄວ້ວາງໃຈໃນຄຳສັ່ງຂອງພຣະອົງຫລືບໍ່?

**4. <u>ເຂົ້າພົວພັນຄືນອີກ:</u>** 1 ກກະສັດ 19:15-18

1. ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ 1 ກະສັດ 19:15-18

**ທົບທວນຄວາມຊົງຈຳ:** - ພຣະເຈົ້າໄດ້ຊົງຮຽກເອີ້ນທ່ານເອລີຢາໃຫ້ເຮັດວຽກງານອັນຍາກລຳບາກຫລາຍຫລາຍຢ່າງ ສິ່ງເຫລົ່ານັ້ນມີຄືຫຍັງແດ່? (ໃຫ້ຂຽນລົງຕາມຄວາມຊົງຈຳຂອງແຕ່ລະຄົນ) ແລະ ມີຫຍັງແດ່ທີ່ພຣະເຈົ້າຮຽກເອີ້ນໃຫ້ທ່ານເຮັດທີ່ເປັນວຽກງານອັນຍາກລຳບາກສຳລັບທ່ານ?

**ຄຳຖາມເພື່ອແລກປ່ຽນຄວາມຄິດຄວາມເຫັນໃນພຣະຄັມພີ:** 1 ກະສັດ 19:15-18

1. ທ່ານບໍ່ອາດສາມາດເຫັນພາບພົດອັນໃຫຍ່ຫລວງ, ແຕ່ເຮັດແນວໃດທ່ານຈະເຊື່ອໄວ້ວາງໃຈໃນພຣະເຈົ້າໄດ້ຢ່າງຢ່າງສຸດຈິດສຸດໃຈຂອງທ່ານ?
2. ສິ່ງທີ່ພຣະເຈົ້າໄດ້ຊົງຮຽກເອີ້ນໃຫ້ທ່ານເຮັດນັ້ນຖືກຕ້ອງຕາມທີ່ທ່ານຢາກເຮັດຢູ່ບໍ່?
3. ທ່ານໄດ້ເຊື່ອໄວ້ວາງໃຈ ແລະຍອມເຮັດວຽກງານ ບໍ່ວ່ານ້ອຍ ຫລືໃຫຍ່ຕາມທີ່ພຣະອົງຊົງບອກໃຫ້ທ່ານເຮັດນັ້ນບໍ່?

## ຈົ່ງຈົດຈໍ່ຢູ່ໃນບົດຮຽນພຣະຄັມພີແຫ່ງຄວາມຈິງນີ້:

- ຄຣິສຕຽນທຸກຄົນ, ທັງຜູ້ທີ່ເຂັ້ມແຂງ ຕ້ອງຈໍາໄວ້ວ່າ ຄວາມອ່ອນແອ, ຄວາມບໍ່ໝັ້ນຄົງ ຈະເຮັດໃຫ້ໝົດກໍາລັງໃຈ.
- ລະຍະເວລາຂອງການກັບສົດຊື່ນຂຶ້ນມາອີກ ແລະການພັກຜ່ອນຈະຊ່ອຍທ່ານໃຫ້ຈົດຈໍາຄວາມດີ ແລະພຣະປະສົງ ແລະການຮຽກເອີ້ນຂອງພຣະອົງ.
- ໃນການປະເມີນຜົນການປະກາດຂອງທ່ານ, ທ່ານໄດ້ຈື່ຈໍາການເຊື່ອຟັງການທີ່ພຣະເຈົ້າໄດ້ນໍາພາຊົນຕ່າງຊາດດ້ວຍວິທີທາງອັນນີ້ມນອນຂອງພຣະອົງ.
- ຫລັງຈາກຢຸດພັກຊົ່ວຄາວຈາກການອອກໄປປ່າວປະກາດຂອງທ່ານແລ້ວ ຕ້ອງຊອກຫາທາງກັບອອກໄປປ່າວປະກາດອີກ, ( ຢ່າຢຸດຢູ່ເລີຍ. )

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org  ແປ ແລະຮຽບຮຽງໂດຍ JH )